# ການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດຢູ່ 04 ແຂວງພາກເໜືອ: ອຸດົມໄຊ, ບໍ່ແກ້ວ, ຫຼວງນ້ຳທາ ແລະ ຜົ້ງສາລີ

**ຜູ້ຂຽນ: ເຍີຢ່າງ ເຍ່ຍຕູ້[1], ບຸນຍົນ ໄຊເກີຢາຈິງຕົວ, ອຳພາ ທຸມມາລາ,**

**ພອນສະຫວັນ ສຸພັດທອນ, ໄຊອຸດົມ ໄຊລີຕາ, ກ້າ ໄຟດ່າງລໍເບູຍຢາວ**

*ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

[1]***ຜູ້ຮັບຜິດຊອບ:*** *ເຍີຢ່າງ ເຍ່ຍຕູ້, ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

ຈາກການສຶກສາ ຫົວຂໍ້ “ການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດຢູ່ 04 ແຂວງພາກເໜືອ: ອຸດົມໄຊ, ແຂວງບໍ່ແກ້ວ, ຫຼວງນ້ຳທາ ແລະ ແຂວງຜົ້ງສາລີ” ມີຈຸດປະສົງ: ສຶກສາສະພາບການນຳໃຊ້ເງິນຕາຕ່າງປະເທດ ແລະ ວິເຄາະປັດໄຈຕົວກຳນົດປະລິມານຂອງການນຳໃຊ້ເງິນຕາຕ່າງປະເທດຂອງບັນດາວິສາຫະກິດ, ໂດຍນຳໃຊ້ແບບຈຳລອງ Order logit Model ແລະ ໃຊ້ຂໍ້ມູນປະຖົມພູມ ມີກຸ່ມຕົວຢ່າງ 154 ຕົວຢ່າງ ຜົນການສຶກສາພົບວ່າ: ປັດໄຈທີ່ມີຜົນຕໍ່ຄວາມຕ້ອງການນຳໃຊ້ເງິນຕາຕ່າງໃນປະລິມານ 10.000-100.000$/ເດືອນ ມີ: ເພດ, ການສຶກສາລະດັບມັດທະຍົມປາຍ, ການສຶກສາລະດັບຊັ້ນສູງ, ທຸລະກິດສ່ວນຕົວ, ຄວາມສະດວກເມື່ອຊື້ເງິນຕານຳທະນາຄານ, ປະລິມານເງິນຕາຕ່າງປະເທດທີ່ສາມາດຊື້ນຳທະນາຄານ, ອັດຕາດອກເບ້ຍເງິນຝາກ, ເມື່ອໄດ້ຮັບຮູ້ລະບຽບການຈາກທະນາຄານແຕ່ມີການຄຸ້ມຄອງເງິນຕາໜ້ອຍ ມີການພົວພັນໃນທິດທາງບວກ ແລະ ປັດໄຈ ວິສາຫະກິດທີ່ຢູ່ແຂວງຫຼວງນ້ຳທາ, ແຫຼ່ງທຶນດຳເນີນທຸລະກິດ, ລາຍຮັບທີ່ເປັນສະກຸນເງິນໂດລາສະຫະລັດ, ມີການຄຸ້ມຄອງເງິນຕາຕ່າງປະເທດໜ້ອຍ, ອັດຕາແລກປ່ຽນເງິນຕາຕ່າງປະເທດ, ການຮັບຮູ້ລະບຽບການຂອງ ທຫລ ແມ່ນມີການພົວພັນທິດທາງລົບ. ປັດໄຈທີ່ມີຜົນຕໍ່ຄວາມຕ້ອງການນຳໃຊ້ເງິນຕາຕ່າງໃນປະລິມານ 100.001-300.000$/ເດືອນ ມີ: ເພດ, ການສຶກສາລະດັບມັດທະຍົມປາຍ, ການສຶກສາລະດັບຊັ້ນສູງ, ທຸລະກິດສ່ວນຕົວ, ຄວາມສະດວກເມື່ອຊື້ເງິນຕາຕ່າງປະເທດນຳທະນາຄານ, ປະລິມານເງິນຕາທີ່ສາມາດຊື້ນຳທະນາຄານ, ອັດຕາດອກເບ້ຍເງິນຝາກ, ເມື່ອໄດ້ຮັບຮູ້ລະບຽບການຈາກທະນາຄານແຕ່ມີການຄຸ້ມຄອງເງິນຕາໜ້ອຍ ມີການພົວພັນທາງລົບ ແລະ ວິສາຫະກິດທີ່ຢູ່ແຂວງຫຼວງນ້ຳທາ, ແຫຼ່ງທຶນການດຳເນີນທຸລະກິດ, ລາຍຮັບທີ່ເປັນສະກຸນເງິນໂດລາສະຫະລັດ, ມີການຄຸ້ມຄອງເງິນຕາຕ່າງປະເທດໜ້ອຍ, ອັດຕາແລກປ່ຽນເງິນຕາຕ່າງປະເທດ, ການຮັບຮູ້ລະບຽບການຂອງ ທຫລ ມີການພົວພັນທາງລົບ; ປັດໄຈທີ່ມີຜົນຕໍ່ຄວາມຕ້ອງການນຳໃຊ້ເງິນຕາຕ່າງໃນປະລິມານຫຼາຍກວ່າ 300,001$/ເດືອນ ມີ: ການສຶກສາລະດັບມັດທະຍົມປາຍ, ຄວາມສະດວກເມື່ອຊື້ເງິນຕານຳທະນາຄານ, ປະລິມານເງິນຕາທີ່ສາມາດຊື້ນຳທະນາຄານ ມີການພົວພັນທາງລົບ ແລະ ການໂອນເງິນຜ່ານທະນາຄານ, ອັດຕາແລກປ່ຽນເງິນຕາຕ່າງປະເທດ ມີການພົວພັນທາງບວກ ດ້ວຍລະດັບເຊື່ອໝັ້ນ 90% ຂຶ້ນໄປ.

**ຄຳສັບສຳຄັນ:** ຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດ; Order Logit Model.

# Management of using foreign currency in 04 northern provinces: Oudomxay, Bokeo, Luang Namtha and Phongsaly

A research study titled "Management of using foreign currency in 04 northern provinces: Oudomxay Province, Bokeo Province, Luang Namtha and Phongsaly Province" which aims to 1) study the general situation of using foreign currency and 2) Analyze the factors determining the size (quantity) of using foreign currency by enterprises units. The population in this study is the enterprises within 04 northern provinces, using a total sample group of 154 samples. Analyze the data by using the Order Logit Model to analyze the relationship between the variables as well as evaluate the value of the variables with Marginal effects. From the results of the study was found that: Factors affecting the need to use foreign currency in the amount of 10,000-100,000$/month are: gender, high school level education, private business, convenience when buying foreign currency with the bank, the amount of foreign currency that can be bought with the bank, the interest rate of the deposit, when the regulations are recognized by the bank but there is little currency management, there are positive relationship and there is a factor of the enterprise in Luang Namtha province, the source of business, the income in US currency, Less foreign currency management, foreign exchange rate, recognition of the regulation from the bank has a negative relationship with a confidence level of 90%. Factors affecting the need to use foreign currency in the amount of 100,001-300,000$/month are: gender, high school education, higher education, private business, convenience when buying foreign currency with the bank, the amount of foreign currency that can be bought with the bank, interest rate of the deposit, when the regulations from the bank are recognized but there is little currency management, there are negative relationship, the enterprise in Luang Namtha province, source of business, the income in US currency, Less foreign currency management, foreign exchange rates, recognition of the regulations of the bank was a negative relationship with a confidence level of 90%; Factors affecting the need to use foreign currency in the amount more than 300,001$/month are: high school level education, convenience when buying foreign currency from the bank, the amount of foreign currency that can be bought with the bank has negative relationship and the factor of transferring money through the bank, foreign exchange rate has positive relationship with a confidence level of 90% .

**Keywords**: Management of using foreign currency; Order Logit Model.